ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ
ກົມການຄ້າພາຍໃນ

ເລກທີ 0611 /ຄພນ.ພຕສ

ນະຄອນຫຼວງວຽງຈັນ, ວັນທີ 16 Jul 2015

ເຖິງ : - ທ່ານຫົວໜ້າພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງວຽງຈັນ.
- ທ່ານປະທານສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ.

ເລື່ອງ : ແນະນຳເພີ່ມເຕີມການຈັດຕັ້ງປະຕິບັດ ຂໍ້ຕົກລົງວ່າດ້ວຍ ທຸລະກິດການຄ້າຂາຍຍົກ ແລະ ການຄ້າຂາຍຍ່ອຍ ເລກທີ 1005/ອຄ,ຄພນ, ລົງວັນທີ 22/05/2015.

- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີວ່າການສະບັບເລກທີ 2250/ອຄ.ຈພງ, ລົງວັນທີ 23/10/2012 ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວ ຂອງກົມການຄ້າພາຍໃນ;
- ອີງຕາມ ຂໍ້ຕົກລົງ ວ່າດ້ວຍທຸລະກິດການຄ້າຂາຍຍົກ ແລະ ການຄ້າຂາຍຍ່ອຍ ສະບັບເລກທີ 1005/ອຄ,ຄພນ, ລົງວັນທີ 22/05/2015;
- ອີງຕາມ ເອກະສານສະບັບເລກທີ 0515/ຄພນ.ພຕສ, ລົງວັນທີ 17/06/2015 ກ່ຽວກັບການແນະນຳຈັດຕັ້ງປະຕິບັດ ຂໍ້ຕົກລົງ ວ່າດ້ວຍທຸລະກິດການຄ້າຂາຍຍົກ ແລະ ການຄ້າຂາຍຍ່ອຍ ສະບັບເລກທີ 1005/ອຄ,ຄພນ, ລົງວັນທີ 22/05/2015.

ກົມການຄ້າພາຍໃນ ກະຊວງອຸດສາຫະກຳ ແລະ ການຄ້າ ຂໍຖືເປັນກຽດແຈ້ງເພີ່ມເຕີມມາຍັງ ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງວຽງຈັນ, ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ ດັ່ງນີ້:

1. ຢູ່ໃນມາດຕາ 12 ຂອງຂໍ້ຕົກລົງ ວ່າດ້ວຍທຸລະກິດການຄ້າຂາຍຍົກ ແລະ ການຄ້າຂາຍຍ່ອຍ ສະບັບເລກທີ 1005/ອຄ,ຄພນ, ລົງວັນທີ 22/05/2015 ຂໍແຈ້ງເພີ່ມເຕີມຄື: ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດ ທີ່ຂຶ້ນທະບຽນວິສາຫະກິດແລ້ວ ສາມາດດຳເນີນທຸລະກິດໃນທຸກປະເພດສິນຄ້າ ເວັ້ນເສຍແຕ່ກົດໝາຍ ແລະ ລະບຽບການກຳນົດເປັນຢ່າງອື່ນ;

2. ຢູ່ໃນມາດຕາມ 13 ຂໍ້ທີ 2 ຂອງຂໍ້ຕົກລົງ ວ່າດ້ວຍທຸລະກິດການຄ້າຂາຍຍົກ ແລະ ການຄ້າຂາຍຍ່ອຍ ສະບັບເລກທີ 1005/ອຄ,ຄພນ, ລົງວັນທີ 22/05/2015 ຂໍແຈ້ງເພີ່ມເຕີມຄື: ສຳລັບສະຖານທີ່ ທີ່ລັດອະນຸມັດໃຫ້ສະເພາະຕາມແຕ່ລະກໍລະນີນັ້ນ ໃນລາຍລະອຽດຈະມີລະບຽບການວາງອອກສະເພາະຕ່າງຫາກ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ຈັດຕັ້ງປະຕິບັດຕາມນີ້ດ້ວຍ.

ຮັກສາການຫົວໜ້າກົມການຄ້າພາຍໃນ

ກະຊວງອຸດສາຫະກຳ ແລະ ການຄ້າ
ກົມການຄ້າພາຍໃນ

ບຸນທຽນ ແກ້ວສີພາ